ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ**

ເລກທີ 1056 /ສຄອຊ.
ນະຄອນຫລວງວຽງຈັນ, 01 OCT 2021

**ຮຽນ: ທ່ານຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມພະຍາດ ແລະແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ເຄົາລົບ ແລະ ນັບຖືຢ່າງສູງ**

**ເລື່ອງ: ສະເໜີອັນຮີບດ່ວນໃນການເປີດໂຮງງານອຸດສາຫະກຳ ຢູ່ນະຄອນຫຼວງວຽງຈັນ**

- ອີງຕາມດຳລັດເລກທີ 237/ນຍ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ລົງວັນທີ 18 ພຶດສະພາ 2020;
- ອີງຕາມໜັງແຈ້ງການຂອງຄະນະສະເພາະກິດ ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມພະຍາດ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ 10 ສະບັບເລກທີ 4303/ສພກ ລົງວັນທີ 17 ກັນຍາ 2021 ກ່ຽວກັບການປະເມີນສະຖານທີ່ເຮັດວຽກໃຫ້ມີຄວາມປອດໄພ ເພື່ອຕອບໂຕ້ການແຜ່ລະບາດຂອງພະຍາດໂຄວິດ 19 ຢູ່ ສປປ ລາວ;
- ອີງຕາມຜົນຂອງການລົງກວດກາຂອງຄະນະສະເພາະກິດນະຄອນຫຼວງວຽງຈັນສະບັບເລກທີ 1505/ກອຫ.ຄຫ ລົງວັນທີ 27 ເດືອນ ກັນຍາ 2021;
- ອີງຕາມໜັງສືແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີສະບັບເລກທີ 1260 ລົງວັນທີ 30 ກັນຍາ 2021 ວ່າດ້ວຍການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ 19 ໃນໄລຍະວັນທີ 1-15 ຕຸລາ 2021;
- ອີງຕາມກອງປະຊຸມພົບປະ ລະຫວ່າງ ສຄອຊ ກັບ ບັນດາໂຮງງານ ວ່າດ້ວຍການເປີດໂຮງງານອຸດສາຫະກຳ ຄືນໃໝ່ ຄັ້ງວັນທີ 1 ຕຸລາ 2021 .

ສະພາການຄ້າ ແລະອຸດສາຫະກຳ ແຫ່ງຊາດລາວ (ສຄອຊ) ຂໍສະແດງຄວາມຊົມເຊີຍເປັນຢ່າງສູງມາຍັງລັດຖະບານ ທີ່ໄດ້ມີມາດຕະການສະກັດກັ້ນ ການແຜ່ລະບາດຂອງພະຍາດ COVID-19 ທີ່ສົ່ງຜົນກະທົບອັນໃຫ່ຍຫຼວງຕໍ່ສຸຂະພາບ, ຊັບສິນ ແລະ ເສດຖະກິດ ຂອງລາວເຮົາ.

ໃນວັນທີ 19 ກັນຍາ 2021 ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ກໍ່ໄດ້ ໄດ້ອອກຄຳສັ່ງເລກທີ 016/ຈນວ ວ່າດ້ວຍມາດຕະການປ້ອງກັນ, ຄວບຄຸມ ແລະແກ້ໄຂການແຜ່ລະບາດຂອງພະຍາດ COVID-19 ຢູ່ນະຄອນຫຼວງວຽງຈັນ ໃນລະຫວ່າງວັນທີ 19-30 ກັນຍາ 2021 ເຮັດໃຫ້ບັນດາໂຮງຈັກໂຮງງານ ແລະ ທຸລະກິດຕ່າງໆ ປິດທັນທີ. ມາຮອດປັດຈຸບັນຍັງບໍ່ທັນມີໂຮງງານໃດໄດ້ຮັບອະນຸຍາດເປີດເທື່ອ, ຍັງລໍຖ້າຄຳເຫັນຂອງຄະນະສະເພະກິດຢູ່;

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມພະຍາດ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ 19 ໄດ້ອອກມາດຕະການປະເມີນສະຖານທີ່ເຮັດວຽກໃຫ້ມີຄວາມປອດໄພ ເພື່ອຕອບໂຕ້ການແຜ່ລະບາດຂອງພະຍາດໂຄວິດ 19 ຢູ່ ສປປ ລາວ ຊຶ່ງຄຳແນະນຳດັ່ງກ່າວໄດ້ສ້າງຂໍ້ຈຳກັດ ແລະ ຂໍ້ຫຍຸ້ງຍາກໃຫ້ແກ່ ໂຮງງານຕັດຫຍິບ, ໂຮງງານອື່ນໆ ຈຳນວນໜຶ່ງ.

ສຄອຊ ສະໜັບສະໜູນທີ່ພາກລັດຈະສ້າງໜ່ວຍງານສັກວັກຊີນເຄື່ອນທີ່ເພື່ອເລັ່ງສັກວັກຊີນ ໃຫ້ພະນັກງານ , ກຳມະກອນ ຂອງໂຮງຈັກ, ໂຮງງານ ໃຫ້ໄດ້ 100% ພາຍໃນປີນີ້ ແລະ ອະນຸຍາດໃຫ້ມີການເປີດໂຮງງານໄດ້ຄືນໃນໄວໆ

ນີ້. ເຖິງແນວໃດກໍ່ຕາມ ສຄອຊ ຂໍສະເໜີໃຫ້ຄະນະສະເພາະກິດແຫ່ງຊາດ ໄດ້ມີການພິຈາລະນາເພີ່ມເຕີມບາງບັນຫາ ດັ່ງນີ້ດັ່ງນີ້:

1. ສະເໜີໃຫ້ຈັດຕັ້ງປະຕິບັດແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1260/ຫສນຍ ລົງວັນທີ 30 ກັນຍາ 2021 ຂໍ້ 3.5 ອະນຸຍາດໃຫ້ເປີດໂຮງຈັກໂຮງງານ ແລະ ວິສາຫະກິດ ທີ່ຢູ່ໃນເຂດບໍ່ມີການລະບາດໃນຊຸມຊົນ ເພື່ອດໍາເນີນກິດຈະການໄດ້ ໂດຍພະນັກງານກໍາມະກອນຕ້ອງໄດ້ຮັບການສັກວັກຊີນໄດ້ຄົບ, ບໍ່ໄດ້ພັກພາອາໄສຢູ່ເຂດຊຸມຊົນ(ເຂດແດງ) ໃຫ້ສາມາດປະຕິບັດໄດ້ຢ່າງເຂັ້ມງວດ ແລະ ສະເໜີໃຫ້ຄະນະສະເພາະກິດພິຈາລະນາຄືນ ກ່ຽວກັບ 10 ມາດຕະການເພື່ອປ້ອງກັນໂຄວິດ 19 ທີ່ຄະນະສະເພາະກິດວາງອອກ ໂດຍສະເພາະແມ່ນຂໍ້ທີ່ລະບຸວ່າ ໂຮງຈັກໂຮງງານທີ່ຈະເປີດໄດ້ນັ້ນຕ້ອງ ມີຫໍພັກຢູ່ໃນໂຮງງານ ຫຼື ນອກໂຮງງານ ແມ່ນສ້າງຄວາມຫຍຸ້ງຍາກ ເນື່ອງຈາກວ່າ ມີພຽງ 10% ຂອງໂຮງຈັກໂຮງຈັກໂຮງງານທັງໝົດທີ່ໄດ້ມາດຕະຖານດັ່ງກ່າວ(ໂຮງງານຢູ່ ສປປ ລາວ ສ່ວນໃຫ່ຍເປັນໂຮງງານຂະໜາດກາງ ແລະ ຂະໜາດນ້ອຍ) ມີຄວາມຈໍາເປັນຕ້ອງໄດ້ມີພະນັກງານ, ກໍາມະກອນ ມາຈາກເຂດຕ່າງໆອ້ອມຂ້າງໂຮງງານ. ການກໍານົດເງື່ອນໄຂດັ່ງກ່າວນີ້ເຮັດໃຫ້ໂຮງງານ ບໍ່ສາດເປີດໄດ້.
2. ບັນດາໂຮງຈັກໂຮງງານທີ່ສາມາດປະຕິບັດ ຕາມແຈ້ງການຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມພະຍາດ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ 19 ສະບັບເລກທີ 4303/ສພກ ລົງວັນທີ 17 ກັນຍາ 2021 ກ່ຽວກັບ ການປະເມີນສະຖານທີ່ເຮັດວຽກໃຫ້ມີຄວາມປອດໄພ ເພື່ອຕອບໂຕ້ການແຜ່ລະບາດຂອງພະຍາດໂຄວິດ 19 ຢູ່ ສປປ ລາວ ແລະ ສາມາດມີຫໍພັກນອກໂຮງງານທີ່ຄວາມປອດໄປແລະໄດ້ຕາມມາດຕະຖານ ແລ້ວກໍ່ຕາມ ແຕ່ກໍ່ຍັງບໍ່ສາມາດເປີດໂຮງຈັກໂຮງງານໄດ້. ຕາມຄໍາແນະນໍາຂອງ ຄະນະສະເພາະກິດ ແມ່ນວ່າ ພະນັກງານກໍາມະກອນ ທີ່ຈະມານອນຢູ່ຫໍພັກນອກໂຮງງານນັ້ນ ຕ້ອງໄດ້ກັກໂຕອີກ 14 ວັນຈິ່ງສາມາດເຮັດວຽກໄດ້. ສຄອຊ ຈິ່ງຂໍສະເໜີວ່າ ສໍາລັບພະນັກງານ ທີ່ຈະເຂົ້ານອນຢູ່ຫໍພັກນອກນັ້ນຕ້ອງໄດ້ກວດໂຄວິດ 19 ແລະ ຖ້າບໍ່ມີເຊື້ອກໍ່ສາມາດເຂົ້າເຮັດວຽກໃນໂຮງງານໄດ້ເລີຍ ໂດຍບໍ່ໄດ້ກັກໂຕ 14 ວັນອີກ.
3. ການກວດເຊື້ອໂຄວິດ 19 ແບບເຫັນຜົນໄວ (ລັບປິດແທັດ) ພາກທຸລະກິດ (ເຈົ້າຂອງໂຮງງານ) ມີຄວາມຍິນດີທີ່ຈະຮັບຜິດຊອບ ທີ່ຈະກວດພະນັກງານຂອງຕົນຢ່າງເປັນລະບົບກ່ອນຈະເຂົ້າຫໍພັກ, ກວດຜູ້ທີ່ມີຄວາມສ່ຽງ ແລະ ສຸ່ມກວດ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ 19. ການກວດເຊື້ອໂຄວິດ 19 ແບບເຫັນຜົນໄວຈະຊ່ວຍຄະນະສະເພາະກິດ ຊອກຫາພະຍາດໄດ້ໄວຂຶ້ນ ຈິ່ງ ສະເໜີໃຫ້ຄະນະສະເພາະກິດກໍານົດມາດຕະການ/ຍີຫໍ້ຂອງເຄື່ອງກວດພະຍາດ ແລະ ອະນຸຍາດໃຫ້ແພດປະຈໍາໂຮງງານ ເປັນຜູ້ກວດໄດ້.
4. ເພື່ອຫຼຸດຜ່ອນງົບປະມານ ແລະ ການບໍລິຫານຈັດການຂອງລັດຖະບານ ໃນການຄຸ້ມຄອງ ສູນກັກກັນ ແລະ ປິ່ນປົວ ທາງ ສຄອຊ ສະເໜີໃຫ້ເຮັດສູນກັກກັນພາກສະໜາມໂດຍການມີສ່ວນຮ່ວມຂອງບັນດາໂຮງງານກ່ຽວຂ້ອງ ເພີ່ມເຕີມ ຢູ່ໃກ້ກັບໂຮງຈັກໂຮງງານ ແລະ ຈັດຕັ້ງມາດຕະການຄຸ້ມຄອງຕາມມາດຕະຖານ ((Standard of Operation Procedure-SOP)ຢ່າງເຂັ້ມງວດ. ຄວາມແອອັດໃນສູນກັກກັນ ທີ່ມີຢູ່ໃນປັດຈຸບັນ ມີປະກົດການ ຕິດເຊື້ອແຜ່ລາມ ຕາມການລາຍງານຂອງບາງໂຮງງານ ກໍລະນີດັ່ງກ່າວນີ້ຈະເຮັດໃຫ້ ມີການເລື່ອນການເປີດໂຮງງານອອກໄປອີກ. ຄະນະສະເພາະກິດຄວນອະນຸຍາດໃຫ້ມີລະບົບ ກັກກັນຢູ່ບ້ານໄດ້ ແຕ່ຕ້ອງມີການປະຕິບັດມາດຕະການຢ່າງເຂັ້ມງວດ. ສຄອຊ ຈະເຮັດວຽກຮ່ວມກັບ ສະມາຄົມຕັດຫຍິບ ໃນການ ສ້າງຄູ່ມືແນະນໍາການຈັດຕັ້ງປະຕິບັດໃນເວລາການເປີດໂຮງງານ ຕາມທີ່ສະມາຄົມໄດ້ຮຽນຮູ້ກັບອົງການຈັດຕັ້ງແຮງງານສາກົນ(ILO) ໃນການປ້ອງກັນໂຄວິດມາແລ້ວ ເປັນຕົ້ນແມ່ນການສ້າງແຜນຮັບມື (SOP) ເຊັ່ນກະກຽມບ່ອນກັກກັນໃນເວລາມີການລະບາດ C1 ແລະ ໂຮງໝໍສະໜາມ C2 ເພື່ອໃຫ້ສາມາດຮັບມືກັບສະພາບການທີ່ເກີດຂຶ້ນຢ່າງທັນການ.

ບັນຫາທີ່ກ່າວມາຂ້າງເທິງນີ້ໄດ້ສ້າງຄວາມສະດວກ, ຂໍ້ຈໍາກັດ ແລະ ຂໍ້ຫຍຸ້ງຍາກໃຫ້ແກ່ພາກທຸລະກິດຂອງພວກເຮົາເປັນຕົ້ນແມ່ນ ບັນດາ ໂຮງງານຕັດຫຍິບ, ໂຮງງານອື່ນໆ ແລະ ໂຄງການໃຫ່ຍ ທີ່ມີຄວາມສ່ຽງໃນການລະບາດ ຕ້ອງໄດ້

ປິດລົງ ແລະ ມີທີທ່າວ່າຈະແກ່ຍາວໄປອີກ ເຮັດໃຫ້ໂຮງງານຕັດຫຍິບ ແລະ ໂຮງງານຜະລິດເພື່ອ ຈໍານວນໜຶ່ງມີແນວຄິດຍ້າຍຖານການຜະລິດຂອງຕົນໄປຍັງປະເທດເພື່ອນບ້ານເປັນຕົ້ນແມ່ນ ກໍາປູເຈຍ ຫຼື ບັງຄລາເທດ. ການປິດກິດຈະການໂຮງງານຕ່າງໆ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ ອາດເປັນເລື່ອງດີ ແຕ່ມັນໄດ້ສ້າງຄວາມເສຍຫາຍໃຫ້ກັບພາກທຸລະກິດ ເປັນຕົ້ນແມ່ນການເສຍໂອກາດທາງການຕະຫຼາດ, ເສຍງົບປະມານໃນການປະຄັບປະຄອງທຸລະກິດ, ຮັກສາແຮງງານ ແລະ ມີທ່າທີວ່າຫຼາຍໂຮງງານອາດຈະໄດ້ມີການປິດໂຕລົງ ເຊິ່ງຈະສົ່ງຜົນກະທົບຕໍ່ເສດຖະກິດ-ສັງຄົມຂອງລາວ ຢ່າງຫຼີກລ້ຽງບໍ່ໄດ້. ໃນສະພາບປັດຈະບັນ ເນື່ອງຈາກວ່າມີຜູ້ຕິດເຊື້ອໂຄວິດ 19 ແຕ່ບໍ່ມີຜູ້ເສຍຊີວິດເນື່ອງຈາກວ່າໂຄງການຊຸກວັກຊິນຂອງລັດຖະບານໄດ້ຮັບຜົນດີພໍສົມຄວນ ຈຶ່ງສະເໜີໃຫ້ມີການຜ່ອນຜັນມາດຕະການປ້ອງກັນ ແລະ ຄວບຄຸມ ເພື່ອເຮັດໃຫ້ເສດຖະກິດໄດ້ມີການຟື້ນຟູ ໄດ້ໄວ.

ດັ່ງນັ້ນ, ສຄອຊ ຈຶ່ງຮຽນສະເໜີມາຍັງທ່ານ ຫົວໜ້າສະເພາະກິດ ເພື່ອຄົ້ນຄ້ວາພິຈາລະນາ ແລະໃຫ້ທິດຊີ້ນໍາຕາມທາງຄວນດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ,

ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ

ປະທານ

ບ່ອນນໍາສົ່ງ:

1. ຫ້ອງວ່າການລັດຖະບານ 01 ສະບັບ
2. ຄະນະສະເພາະກິດນະຄອນຫຼວງ 1 ສະບັບ
3. ກະຊວງອຸດສາຫະກໍາ ແລະ ການຄ້າ 01 ສະບັບ
4. ຄະນະສະເພາະກິດ 32 01 ສະບັບ

ອຸເດດ ສຸວັນນະວົງ

ຕິດຕໍ່ໂທ: 020 55813681